ໂຄງການ “ສ້າງຮອຍຍິ້ມດ້ວຍການແບ່ງປັນ” ປີ 2
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຮ່ວມກັບ ບໍລິສັດ ຂົນສົ່ງ ສະດາທອງ

ວັນທີ 16-17 ເດືອນ ທັນວາ 2017 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ລົງມອບອຸປະກອນການຮຽນ ການສອນໃຫ້ແກ່ນັກຮຽນ ແລະ ຄູອາຈານ ແລະ ມອບເຄື່ອງບັນເທົາທຸກ ປະເພດເຄື່ອງນຸ່ງຫົ່ມ, ອາຫານແຫ້ງ ແລະ ຜ້າຫົ່ມ ຈຳນວນ 200 ຜືນ ໃຫ້ແກ່ປະຊາຊົນ ບ້ານ ນາທອງ, ເມືອງ ຫີນເຫີບ ແລະ ບ້ານ ນາດອກຄຸນ, ເມືອງ ແມດ (ໜຶ່ງ ໃນບ້ານທີ່ທຸກຍາກ) ເພື່ອເປັນການບັນເທົາຄວາມທຸກໃຫ້ພໍ່ແມ່ພີ່ນ້ອງ ບ້ານ ນາທອງ ແລະ ບ້ານ ນາດອກຄຸນ ແລະ ນ້ອງໆ ນັກຮຽນ ໂຮງຮຽນ ປະຖົມ ນາທອງ ແລະ ໂຮງຮຽນ ປະຖົມ ນາດອກຄຸນ ທີ່ກຳລັງປະສົບກັບໄພໜາວ.

ໃນການເດີນທາງໄປມອບເຄື່ອງຊ່ວຍເຫຼືອຄັ້ງນີ້ ນຳພາໂດຍ ທ່ານ ກິດສະດາ ສຸຄະບັນດິດ ຮອງຜູ້ອຳນວຍການ ໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີມະຫາຊົນ. ເຊິ່ງມີປະຊົນຊົນ ບ້ານ ນາທອງ ທີ່ມາລໍຖ້າ ຮັບເຄື່ອງຊ່ວຍເຫຼືອຈຳນວນ 71 ຄອບຄົວ ປະກອບມີ: 221 ຄົນ, ນັກຮຽນ 46 ຄົນ ແລະ ບ້ານ ນາດອກຄຸນ ໄດ້ຮັບເຄື່ອງຊ່ວຍເຫຼືອ ຈຳນວນ 72 ຄອບຄົວ ປະກອບມີ: 331 ຄົນ, ນັກຮຽນ 55 ຄົນ ເຊິ່ງຕາງໜ້າຮັບເຄື່ອງຊ່ວຍເຫຼືອແມ່ນ ນາຍບ້ານ ແລະ ຄູອາຈານ.

ສຸວັນນີ ໂຮມເຊັນເຕີ ຈະຢູ່ຄຽງຄູ່ສັງຄົມລາວຕະຫຼອດໄປ.



- ວັນທີ 16 ທັນວາ 2017 ທ່ານ ກິດສະດາ ສຸຄະບັນດິດ ພ້ອມດ້ວຍພະນັກງານ ບໍລິສັດ ສຸວັນນີ ໄດ້ມອບເຄື່ອງ ບັນເທົາທຸກໃຫ້ແກ່ປະຊາຊົນ ບ້ານ ນາທອງ ເມືອງ ຫີນເຫີບ ແຂວງ ວຽງຈັນ.











- ວັນທີ 17 ທັນວາ 2017 ທ່ານ ກິດສະດາ ສຸຄະບັນດິດ ພ້ອມດ້ວຍພະນັກງານ ບໍລິສັດ ສຸວັນນີ ໄດ້ມອບເຄື່ອງ ບັນເທົາທຸກໃຫ້ແກ່ປະຊາຊົນ ບ້ານ ນາດອກຄຸນ ເມືອງ ແມດ ແຂວງ ວຽງຈັນ.







